# ຂໍ້ກຳນົດ
# ວ່າດ້ວຍ ການນຳໃຊ້ກາຫມາຍມາດຕະຖານ ຜະລິດຕະພັນ
# ແລະ ສິນຄ້າລາວ.

(ດັດແກ້ຄັ້ງທີ 2)

ສຳນັກງານນາຍົກລັດຖະມົນຕີ

ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ

ກົມຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ

ປີ 2006

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ
ອົງການວິທະຍາສາດ, ເຕັກໂນໂລຊີ
ແລະ ສິ່ງແວດລ້ອມ ເລກທີ: 1718 /ອວຕສສມຍ
ນະຄອນຫລວງວຽງຈັນ, ວັນທີ: 07/08/2006

# ຂໍ້ກຳນົດ
# ວ່າດ້ວຍ ການນຳໃຊ້ກາໝາຍມາດຕະຖານ ຜະລິດຕະພັນ ແລະ ສິນຄ້າລາວ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ່ 85/ນຍ, ລົງວັນທີ 02 ພະຈິກ 1995 ວ່າດ້ວຍການຄຸ້ມຄອງມາດຕະຖານ ແລະ ຄຸນນະພາບຜະລິດຕະພັນ ແລະ ສິນຄ້າ.
- ອີງໃສ່ ຄວາມຮຽກຮ້ອງຕ້ອງການ ໃນການນຳໃຊ້ກາໝາຍ ມາດຕະຖານ ເພື່ອໃຫ້ຈຳແນກໄດ້ວ່າ ຜະລິດຕະພັນ ແລະ ສິນຄ້າ ຫລື ບໍລິການໃດໜຶ່ງໄດ້ຜ່ານການກວດກາຄຸນນະພາບ ແລະ ໄດ້ມາດ ຕະ ຖານແລ້ວ.
- ອີງໃສ່ຄວາມຮຽກຮ້ອງຕ້ອງການໃຫ້ດັດແກ້ບາງມາດຕາຂອງຂໍ້ກຳນົດ ວ່າດ້ວຍການນຳໃຊ້ກາໝາຍ ມາດຕະຖານ ຜະລິດຕະພັນ ແລະ ສິນຄ້າ

ລາວ ສະບັບເລກທີ່ 1035 / ອວຕສສນຍ ລົງວັນທີ 11/06/2002 ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບການຕົວຈິງໃນປະຈຸບັນ.

## ຫົວໜ້າອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ອອກຂໍ້ກຳນົດ:

## ຫມວດທີ I

## ວ່າດ້ວຍ ກາຫມາຍມາດຕະຖານ.

**ມາດຕາ 1:** ກາຫມາຍມາດຕະຖານ ແມ່ນກຳນົດຂຶ້ນເພື່ອ ຢັ້ງຢືນຄຸນນະພາບຜະລິດຕະພັນ ແລະ ສິນຄ້າທີ່ໄດ້ມາດຕະຖານ ແລະ ແນໃສ່ຊຸກຍູ້ຜະລິດຕະພັນ ແລະ ສິນຄ້າໃຫ້ມີຄຸນນະພາບສູງ ແລະ ຮັບປະກັນສິດ ຜົນປະໂຫຍດ ຂອງຜູ້ຜະລິດ ແລະ ຜູ້ຊົມໃຊ້.

**ມາດຕາ 2:** ກາຫມາຍມາດຕະຖານ ໄດ້ນຳໃຊ້ສະເພາະກັບ ຜະ ລິດຕະພັນ ແລະ ສິນຄ້າ ທີ່ໄດ້ມີການກຳນົດມາດຕະຖານແຫ່ງຊາດຂຶ້ນ ເຊິ່ງປະກອບມີ ມາດຕະຖານບັງຄັບ ແລະ ມາດຕະຖານສະຫມັກໃຈ.

1. ມາດຕະຖານບັງຄັບ ແມ່ນມາດຕະຖານທີ່ໄດ້ກຳນົດລະດັບຄາດຫມາຍທີ່ພົວພັນກັບ ການປ້ອງກັນຄວາມສະຫງົບ, ຄວາມປອດໄພ, ສຸຂະອານາໄມ, ສຸຂະພາບ ແລະ ສິ່ງແວດລ້ອມ ຫລື ແມ່ນມາດຕະຖານ ຂອງ

ຜະລິດຕະພັນ ແລະ ສິນຄ້າຍຸດທະສາດສຳຄັນທີ່ລັດຖະບານໄດ້ກຳນົດແຕ່ລະໄລຍະ.

2. ມາດຕະຖານສະໜັກໃຈ ແມ່ນມາດຕະຖານທີ່ໄດ້ກຳນົດ ລະດັບຄາດໝາຍ ແລະ ຖືກສ້າງຂຶ້ນໂດຍຜູ້ທຳການຜະລິດ ເພື່ອແນໃສ່ຮັບປະກັນ ຄຸນນະພາບ ຂອງຜະລິດຕະພັນ ແລະ ສິນຄ້າຂອງຕົນໂດຍການຊີ້ນຳ ແລະ ຮັບຮອງຂອງ ອົງການຄຸ້ມຄອງມາດຕະຖານ.

**ມາດຕາ 3:** ກາໝາຍມາດຕະຖານປະກອບມີ 2 ລັກສະນະຄື: ກາໝາຍມາດຕະຖານສະໜັກໃຈ ແລະ ກາໝາຍມາດຕະຖານບັງຄັບ.

1. ກາໝາຍມາດຕະຖານສະໜັກໃຈ ແມ່ນກາໝາຍມາດຕະຖານ ທີ່ມີລັກສະນະເປັນຮູບສາມແຈສະເໝີມີມູມແຫລມເທົ່າກັບ 60 ອົງສາ, ມີອັກສອນຕົວ "ລ" ຢູ່ກາງ ເຊິ່ງມີຂະໜາດໃຫ່ຍເຕັມສ່ວນ ຢູ່ໃນໃຈກາງຂອງຮູບສາມແຈ. ດ້ານຫລັງຂອງອັກສອນຕົວ "ລ" ເທົ່າກັບຄວາມໜາຂອງແຕ່ລະຂ້າງ ຫລື ເທົ່າກັບ 1/12 ຂອງຄວາມຍາວໜຶ່ງຂ້າງ ຂອງຮູບສາມແຈ. ຖານດ້ານລຸ່ມຂອງອັກສອນຕົວ "ລ" ປະກອບເປັນຮູບສາມແຈ ຊຶ່ງມີມູມແຫລມສອງຂ້າງເທົ່າກັບ 30 ອົງສາ ທີ່ຕິດກັບຂ້າງໜຶ່ງ ຂອງຮູບສາມແຈ.
2. ກາໝາຍມາດຕະຖານບັງຄັບ ແມ່ນຄືກັນກັບກາໝາຍມາດຕະຖານສະໜັກໃຈທີ່ມີຮູບວົງມົນອ້ອມຂ້າງ ຂອງຮູບສາມແຈ ແລະ ໄລຍະຫ່າງອອກຈາກ ແຫລມຂອງ

ຮູບສາມແຈ ມີຄວາມຍາວເທົ່າກັບ ຄວາມໜາຂອງອັກສອນຕົວ "ລ".

**ມາດຕາ 4:** ບັນດາການຈັດຕັ້ງລັດ, ລວມໝູ່, ເອກະຊົນ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ ການຈັດຕັ້ງ) ແລະ ບຸກຄົນທີ່ທໍາການຜະລິດສິນຄ້າເຊິ່ງຜະລິດຕະພັນສິນຄ້າໄດ້ກໍານົດມາດຕະຖານແລ້ວ ແລະ ມີຈຸດປະສົງຢາກນໍາໃຊ້ ກາໝາຍມາດຕະຖານ ກັບຜະລິດຕະພັນ ແລະ ສິນຄ້າດັ່ງກ່າວໃຫ້ຍື່ນຄໍາຮ້ອງຂໍອະນຸຍາດນໍາໃຊ້ກາໝາຍມາດຕະຖານ ນໍາອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ ອົງການຄຸ້ມຄອງມາດຕະຖານ).

**ມາດຕາ 5**: ການຈັດຕັ້ງ ແລະ ບຸກຄົນ ທີ່ຍື່ນຄໍາຮ້ອງຂໍອະນຸຍາດ ນໍາໃຊ້ກາໝາຍມາດຕະຖານນັ້ນຕ້ອງຢັ້ງຢືນວ່າ ມາດຕະຖານຜະລິດຕະພັນສິນຄ້າຂອງຕົນໄດ້ສອດຄ່ອງກັບມາດຕະຖານ ທີ່ອົງການຄຸ້ມຄອງມາດຕະຖານ ໄດ້ຮັບຮອງເອົາແລ້ວ.

ມາດຕາ **6**: ໃນກໍລະນີມີຜູ້ຂໍອະນຸຍາດ ນໍາໃຊ້ກາໝາຍມາດຕະ ຖານຫາກມີໂຮງງານຫລາຍແຫ່ງ ທີ່ທໍາການຜະລິດສິນຄ້າຊະນິດດຽວກັນ ແລະ ໄດ້ນໍາໃຊ້ເຄື່ອງໝາຍການຄ້າແບບດຽວກັນນັ້ນ ມີສິດຍື່ນຄໍາຮ້ອງ ຂໍອະນຸຍາດນໍາໃຊ້ກາໝາຍມາດຕະຖານ ກັບຜະລິດຕະພັນສິນຄ້າ

ທີ່ຜະລິດຈາກໂຮງງານຫລາຍແຫ່ງຮ່ວມກັນ ຫລື ຈະຂໍອະນຸຍາດນຳໃຊ້ ກາຫມາຍມາດຕະຖານກັບຜະລິດຕະພັນ ທີ່ຜະລິດຈາກໂຮງງານບາງແຫ່ງ ຫລື ແຕ່ລະແຫ່ງສະເພາະຕ່າງຫາກກໍໄດ້.

## ຫມວດທີ II

## ວ່າດ້ວຍ ການອະນຸຍາດນຳໃຊ້ກາຫມາຍມາດຕະຖານ.

**ມາດຕາ** 7: ເພື່ອຮັບການ ອະນຸຍາດນຳໃຊ້ ກາຫມາຍມາດຕະຖານກັບຜະລິດຕະພັນ ແລະ ສິນຄ້າ ຜູ້ທຳການຜະລິດ ຈະຕ້ອງໄດ້ຍື່ນຄຳຮ້ອງຂໍອະນຸຍາດນຳໃຊ້ກາຫມາຍມາດຕະຖານ ເຊິ່ງປະກອບດ້ວຍຂໍ້ມູນ ແລະ ເອກະສານຕ່າງໆ (ຕາມແບບຟອມ ຂອງອົງການຄຸ້ມຄອງມາດຕະຖານ) ກຳນົດໄວ້ຄື :

1. ຕົວຢ່າງຜະລິດຕະພັນ ແລະ ສິນຄ້າ 1 ຊຸດ ພ້ອມທັງສິ່ງຫຸ້ມຫໍ່, ສິ່ງບັນຈຸ, ສິ່ງມັດຜູກ,
2. ແຜນການຜະລິດ (ໂດຍສັງເຂບ),
3. ລາຍການວັດຖຸປະກອບ ທີ່ໃຊ້ເພື່ອທຳການຜະລິດ,
4. ເຄື່ອງມື ແລະ ວິທີການທີ່ນຳໃຊ້ກວດສອບ ຄຸນະພາບຜະລິດຕະພັນ ແລະ ສິນຄ້າ,
5. ເອກະສານອ້າງອີງທີ່ຈຳເປັນ (ໃບອະນຸຍາດດຳເນີນກິດຈະການ, ໃບຢັ້ງຢືນຂຶ້ນທະບຽນ ເຄື່ອງຫມາຍການຄ້າ).

**ມາດຕາ 8**: ຂັ້ນຕອນຂອງການອະນຸຍາດນຳໃຊ້ກາຫມາຍມາດຕະຖານ:

1. ພາຍຫລັງຈາກການກວດກາຫລັກຖານ ແລະ ເອກະສານຕ່າງໆ ເຫັນວ່າຄົບຖ້ວນ ແລ້ວ ອົງການຄຸ້ມຄອງມາດຕະຖານ ຈະໄດ້ສົ່ງຄະນະວິຊາການ ລົງກວດກາຕົວຈິງຢູ່ໂຮງງານສໍາລັບການຕີລາຄາລະບົບການຄຸ້ມຄອງຄຸນນະພາບຜະລິດຕະພັນ ແລະ ນອກນັ້ນ ອົງການຄຸ້ມຄອງມາດຕະຖານ ຈະໄດ້ນໍາຕົວຢ່າງຜະລິດຕະພັນດັ່ງກ່າວ ໄປກວດສອບຄືນໃຫມ່.
2. ໃນກໍລະນີທີ່ຜະລິດຕະພັນ ແລະ ສິນຄ້າ ຍັງບໍ່ໄດ້ລະດັບມາດຕະຖານທີ່ກໍານົດໄວ້ ອົງການຄຸ້ມຄອງມາດຕະຖານ ຈະໄດ້ໃຫ້ຄໍາແນະນໍາເພື່ອປັບປຸງແກ້ໄຂໃຫ້ໄດ້ຕາມລະດັບຄາດຫມາຍ ຂອງມາດຕະຖານທີ່ ໄດ້ກໍານົດໄວ້,ພາຍຫລັງປັບປຸງທາງຄະນະວິຊາການ ຈະລົງກວດຄືນໃຫມ່ ຖ້າເຫັນວ່າໄດ້ຕາມຄາດຫມາຍແລ້ວ ອົງການຄຸ້ມຄອງມາດຕະຖານ ຈະທໍາການຢັ້ງຢືນໃຫ້ອະນຸຍາດນໍາໃຊ້ກາຫມາຍມາດຕະຖານແກ່ຜູ້ຮ້ອງຂໍ.
3. ການລົງຕິດຕາມ ແລະ ກວດກາໂຮງງານນັ້ນ ອົງການຄຸ້ມຄອງມາດຕະຖານ ຈະເປັນຜູ້ກໍານົດຕ່າງ ຫາກ, ພາຍຫລັງການກວດກາ ຄະນະວິຊາການ ຈະໄດ້ນໍາເອົາ ຂໍ້ມູນຕ່າງໆໄປສຶກສາ ແລະ ເກັບເປັນ ຄວາມລັບ ແລ້ວແຈ້ງໃຫ້ເຈົ້າຂອງໂຮງງານຮັບຮູ້ ຫລື ດໍາເນີນການແກ້ໄຂ.

**ມາດຕາ 9**: ຜູ້ຂໍອະນຸຍາດນໍາໃຊ້ກາຫມາຍມາດຕະຖານຕ້ອງໄດ້ເສຍຄ່າບໍລິການ ແລະຄ່າທໍານຽມດັ່ງນີ້:

1. ຄ່າຄໍາຮ້ອງ 1 ຊຸດ 5,000 ກີບ,
2. ຄ່າທໍານຽມ 30,000 ກີບ

3. ຄ່າກວດສອບຄຸນນະພາບແຕ່ລະຄັ້ງ ໃຫ້ອີງໃສ່ມູນຄ່າຂອງ ການກວດສອບຕົວຈິງຂອງ ຫ້ອງກວດ ສອບທີ່ກ່ຽວ ຂ້ອງ.
4. ຄ່າບໍລິການຄຸນນະພາບ 600,000 ກີບຕໍ່ການອະນຸຍາດ ໜຶ່ງຄັ້ງ.

## ໝວດທີ III
## ວ່າດ້ວຍ ການນໍາໃຊ້ກາໝາຍມາດຕະຖານ.

**ມາດຕາ 10**: ໃຫ້ຜູ້ຮັບອະນຸຍາດນໍາໃຊ້ ກາໝາຍມາດຕະຖານ ເປັນຜູ້ ຈັດທໍາກາໝາຍມາດຕະຖານດ້ວຍຕົນເອງໂດຍໃຫ້ສອດຄ່ອງ ກັບ ກາໝາຍມາດຕະຖານ ທີ່ອົງການຄຸ້ມຄອງມາດຕະຖານ ໄດ້ກໍານົດອອກ ໂດຍບໍ່ຈໍາກັດຂະໜາດ ແລະ ສີສັນ.

**ມາດຕາ 11**: ການນໍາໃຊ້ກາໝາຍມາດຕະຖານ ໃຫ້ລະບຸເລກ ໝາຍມາດຕະຖານແລະ ເລກໝາຍຂອງໃບອະນຸຍາດ ນໍາໃຊ້ ກາໝາຍມາດຕະຖານໄວ້ລຸ່ມ ຫລື ຂ້າງຂອງກາໝາຍ ມາດຕະຖານຄວນສະແດງຂໍ້ຄວາມໃຫ້ເຫັນໄດ້ງ່າຍ ແລະ ຊັດ ເຈນໄວ້ທີ່:

1. ຜະລິດຕະພັນ ຫລື ຢູ່ໃນເຄື່ອງໝາຍການຄ້າ.
2. ສິ່ງບັນຈຸ, ສິ່ງຫຸ້ມຫໍ່ ແລະ ສິ່ງມັດຜູກ, ໃນກໍລະນີທີ່ບໍ່ ສາມາດ ສະແດງກາໝາຍຢູ່ນໍາຜະລິດຕະພັນ ຫລື ຢູ່ໃນ ເຄື່ອງໝາຍການຄ້າໄດ້, ຖ້າຜະລິດຕະພັນ ທີ່ຜະລິດຈາກ

ສອງແຫ່ງຂຶ້ນໄປ ໄດ້ນຳໃຊ້ເຄື່ອງຫມາຍການຄ້າອັນດຽວກັນ ໃຫ້ລະບຸຊື່ ແລະ ທີ່ຕັ້ງຂອງໂຮງງານຜະລິດ ຫລື ໃຊ້ລະຫັດແທນຊື່ ແລະ ທີ່ຕັ້ງຂອງໂຮງງານກໍ່ໄດ້.

3. ໃນກໍລະນີທີ່ຜະລິດຕະພັນເປັນສິ່ງບັນຈຸ, ສິ່ງຫຸ້ມຫໍ່ ແລະ ສິ່ງມັດຜູກໃຫ້ມີຂໍ້ຄວາມໄວ້ລຸ່ມກາຫມາຍມາດຕະຖານໃຫ້ສະແດງສະເພາະກັບສິ່ງ ເຫລົ່ານັ້ນເທົ່ານັ້ນ.

**ມາດຕາ 12**: ຫ້າມການຈັດຕັ້ງ ແລະ ບຸກຄົນໃດຫນຶ່ງ ນຳໃຊ້ກາຫມາຍມາດຕະຖານ ກັບຜະລິດຕະພັນແລະສິນຄ້າຂອງຕົນ ກ່ອນໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງມາດຕະຖານ.

**ມາດຕາ 13**: ຜູ້ໄດ້ຮັບອະນຸຍາດມີສິດນຳໃຊ້ກາຫມາຍມາດ ຕະຖານ ສະເພາະກັບຜະລິດຕະພັນ ແລະ ສິນຄ້າ ທີ່ທາງອົງການຄຸ້ມຄອງມາດຕະຖານ ໄດ້ອະນຸຍາດໃຫ້ພາຍໃນກຳນົດ 3 ປີ ນັບແຕ່ ມື້ ໄດ້ຮັບ ອະນຸຍາດນຳໃຊ້ກາໝາຍ ມາດຕະຖານເປັນຕົ້ນໄປ, ພາຍຫລັງໃບອະນຸຍາດໝົດອາຍຸສາມາດຕໍ່ໃບອະນຸຍາດໄດ້ບົນພື້ນຖານການພິຈາລະນາ ຂອງອົງການ ຄຸ້ມຄອງມາດຕະຖານຕາມເງື່ອນໄຂ ຕ່າງໆທີ່ກຳນົດຢູ່ໃນຂໍ້ກຳນົດສະບັບນີ້ ແລະ ລະບຽບ ການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 14:** ຖ້າຜູ້ໄດ້ຮັບອະນຸຍາດ ຫາກມີຈຸດປະສົງ ປະກອບກິດຈະການຕາມມາດຕະຖານໃຫມ່ ຫລືດັດແປງ ແກ້ໄຂມາດຕະຖານເກົ່ານັ້ນໃຫ້ຍື່ນຄຳຮ້ອງຂໍອະນຸຍາດນຳອົງການຄຸ້ມຄອງ ມາດຕະຖານແຕ່ໃນໄລຍະການພິຈາລະນາຂອງ ອົງການຄຸ້ມຄອງມາດຕະຖານນັ້ນໃຫ້ຜູ້ຮ້ອງຂໍດຳເນີນກິດຈະການຕາມມາດຕະຖານເກົ່າໄປກ່ອນ ຈົນກວ່າອົງການຄຸ້ມຄອງມາດຕະຖານອອກໃບອະນຸຍາດນຳໃຊ້ກາຫມາຍມາດຕະຖານໃຫມ່ໃຫ້.

**ມາດຕາ 15:** ໃບອະນຸຍາດນຳໃຊ້ ກາຫມາຍມາດຕະຖານ ຫມົດອາຍຸໄປກໍ່ຕໍ່ເມື່ອ:

1. ຜູ້ຮັບໃບອະນຸຍາດ ເລີກປະກອບກິດຈະການ,
2. ຜູ້ຮັບໃບອະນຸຍາດຂໍເລີກນຳໃຊ້ກາຫມາຍມາດ ຕະຖານກັບຜະລິດຕະພັນແລະສິນຄ້າຂອງຕົນ,
3. ໃນກໍລະນີມີການປະກາດການດັດແປງແກ້ໄຂ, ຍົກເລີກມາດຕະຖານເກົ່າ ຫລື ກຳນົດມາດຕະຖານໃຫມ່ຂອງຜະລິດຕະພັນ ແລະ ສິນຄ້າ,
4. ໃນກໍລະນີທີ່ມີການກວດກາພົບເຫັນວ່າຜະລິດຕະພັນ ແລະ ສິນຄ້າຂາດຄຸນນະພາບ ແລະ ບໍ່ເປັນໄປຕາມມາດຕະຖານຕາມທີ່ໄດ້ກຳນົດໄວ້.

**ມາດຕາ 16:** ໃນເມື່ອຜູ້ໄດ້ຮັບອະນຸຍາດນຳໃຊ້ກາຫມາຍມາດຕະຖານເລີກປະກອບກິດຈະການຕ້ອງແຈ້ງໃຫ້ອົງການ

ຄຸ້ມຄອງມາດຕະຖານຮັບຮູ້ ພາຍໃນ 30 ວັນ ກ່ອນ ຫລື ຫລັງວັນເລີກປະກອບກິດຈະການຂອງຕົນ.

ມາດຕາ 17: ໃນກໍລະນີມີການຍົກຍ້າຍຫລືຂະຫຍາຍກິດຈະການ ໄປຢູ່ສະຖານທີ່ອື່ນ ຜູ້ໄດ້ຮັບ ອະນຸຍາດຕ້ອງໄດ້ແຈ້ງ ໃຫ້ອົງການຄຸ້ມຄອງ ມາດຕະຖານຮັບຮູ້ເສຍກ່ອນ ເພື່ອ ລົງຕິດຕາມ ແລະ ຖ້າເຫັນວ່າ ໄດ້ຕາມເງື່ອນໄຂ ຕ່າງໆທີ່ກໍານົດຢູ່ໃນຂໍ້ກໍານົດສະບັບນີ້ຈຶ່ງຈະອະນຸຍາດ ນໍາໃຊ້ກາໝາຍມາດຕະຖານແຫ່ງຊາດນັ້ນໄດ້. ໃນກໍ ລະ ນີມີການໂອນໃບອະນຸຍາດນໍາໃຊ້ກາຫມາຍ ມາດຕະຖານຜູ້ໄດ້ຮັບອະນຸຍາດຕ້ອງໄດ້ແຈ້ງໃຫ້ອົງ ການ ຄຸ້ມຄອງມາດຕະຖານຮັບຮູ້ເສຍກ່ອນຈຶ່ງຈະ ດໍາເນີນການໄປໄດ້.

## ຫມວດທີ IV
## ວ່າດ້ວຍ ການຍ້ອງຍໍ ແລະ ມາດຕະການຕໍ່ຜູ້ລະເມີດ ກ່ຽວກັບ ການຢັ້ງຢືນ ກາຫມາຍມາດຕະຖານ

**ມາດຕາ 18:** ຜູ້ທີ່ມີຜົນງານໃນການປະຕິບັດ, ການຊອກເຫັນ ແລະ ລາຍງານການລະເມີດ ຂໍ້ກໍານົດ ສະບັບນີ້ ແລະ ລະບຽບການຕ່າງໆກ່ຽວກັບ ມາດຕະຖານ ແລະ ຄຸນນະພາບຜະລິດຕະພັນ ແລະ ສິນຄ້າໃຫ້ແກ່ອົງການຄຸ້ມຄອງຂັ້ນຕ່າງໆ ຈະໄດ້ຮັບ

ການຍ້ອງຍໍ ແລະ ຮັບຄ່າບຳເນັດ ຕາມການກຳນົດ ຂອງອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 19**: ບັນດາມາດຕະການຕໍ່ຜູ້ລະເມີດ ກ່ຽວກັບການນຳໃຊ້ ກາຫມາຍມາດຕະຖານ:

ການຈັດຕັ້ງ ຫລື ບຸກຄົນໃດທີ່ທຳການຜະລິດ, ຂາຍ ແລະ ຈຳໜ່າຍຜະລິດຕະພັນ ແລະ ສິນຄ້າມີເຈດຕະ ນາປອມແປງ ແລະ ນຳໃຊ້ກາຫມາຍມາດຕະຖານ ໂດຍບໍ່ໄດ້ຮັບອະນຸຍາດຈາກ ອົງການຄຸ້ມຄອງ ມາດຕະຖານ ຫລື ບໍ່ສອດຄ່ອງກັບມາດຕະຖານທີ່ ໄດ້ກຳນົດໄວ້ຈະຖືກຕັກເຕືອນ,ຖືກປັບໃຫ້ **500,000 ກີບ ແລະ** ຈະຖືກດຳເນີນຄະດີຕາມກົດ ໝາຍ ທີ່ກ່ຽວຂ້ອງ

**ມາດຕາ 20**: ອົງການຄຸ້ມຄອງມາດຕະຖານມີສິດລຶບລ້າງໃບ ນຳໃຊ້ ກາຫມາຍມາດຕະຖານ ຖ້າພົບວ່າ:

1. ມີການດັດແປງ ຫລື ໃຫ້ຜູ້ອື່ນນຳໃຊ້ໃບຢັ້ງຢືນ ກາ ຫມາຍມາດຕະຖານ ໂດຍບໍ່ໄດ້ຮັບອະນຸຍາດຈາກ ອົງການຄຸ້ມຄອງມາດຕະຖານ,
2. ມີການນຳໃຊ້ ກາຫມາຍມາດຕະຖານ ກັບຜະລິດຕະ ພັນ ແລະ ສິນຄ້າ ທີ່ບໍ່ສອດຄ່ອງກັບ ມາດຕະຖານທີ່ ໄດ້ກຳນົດໄວ້.

3. ມີການນຳໃຊ້ກາຫມາຍມາດຕະຖານ ກັບຜະລິດຕະພັນ ແລະ ສິນຄ້າ ທີ່ບໍ່ມີຊື່ຂອງຜູ້ຜະລິດ ຫລື ບໍ່ມີເຄື່ອງຫມາຍການຄ້າ.

## ຫມວດທີ V
## ວ່າດ້ວຍການຈັດຕັ້ງປະຕິບັດ.

ມາດຕາ **21**: ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມອບໃຫ້ກົມຊັບສິນທາງປັນຍາ ມາດຕະຖານ ແລະ ວັດແທກ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ **22**: ຂໍ້ກຳນົດສະບັບນີ້ປ່ຽນແທນຂໍ້ກຳນົດເລກທີ 1035/ອວຕສສນຍ, ລົງວັນທີ 11/06/2002 ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກໆຂໍ້ກຳນົດ ແລະ ລະບຽບການ ອື່ນໆ ທີ່ອອກກ່ອນຫນ້ານີ້ ຫາກຂັດກັບຂໍ້ກຳນົດສະບັບນີ້ ລ້ອນແຕ່ຖືກຍົກເລີກ.

ລັດຖະມົນຕີ, ຫົວຫນ້າອົງການວິທະຍາສາດ
ເຕັກໂນໂລຊີ ແລະ ສິ່ງແວດລ້ອມ

ສ.ຈ.ດຣ. ບຸນຕຽມ ພິດສະໄໝ




ມາດຕະຖານ ສະບັນກໃຈ

